ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ງການອະທິໄອຍະການ

ະຊາຊົນ ແຫ່ງ ສປປລ.

/ເລກທີ່ 12 /ອທກ.

# ຄຳ ສັ່ງ ແນະ ນຳ

ເຖິງ ບັນດາໄອຍະການປະຊາຊົນແຂວງ, ກຳແພງນະຄອນ

ໃນທົ່ວປະເທດ.

ເລື້ອງ : ບັນຫາການອະນຸມັດໃຫ້ຢູ່ເຮືອນທີ່ລັດຄຸ້ມຄອງ.

ໃນໄລຍະຜ່ານມາໄດ້ສັງເກດເຫັນວ່າ ສານປະຊາຊົນໄດ້ຕັດສິນໃຫ້ລັດຄຸ້ມຄອງທີ່ດິນແລະເຮືອນ ແຕ່ພ້ອມກັນນັ້ນກໍໄດ້ຕັດສິນອະນຸມັດໃຫ້ບຸກຄົນຢູ່ເຮືອນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງສານປະຊາຊົນແລະກົດໝາຍວ່າດ້ວຍກຳມະສິດ ສານປະຊາຊົນມີສິດອຳນາດຕັດສິນແຕ່ບັນຫາກຳມະສິດເທົ່ານັ້ນ ສ່ວນການປະຕິບັດນະໂຍບາຍໃຫ້ຢູ່ເຮືອນທີ່ລັດຄຸ້ມຄອງນັ້ນແມ່ນສິດຂອງອົງການບໍລິຫານເປັນຜູ້ອະນຸມັດ.

ສະນັ້ນໃນເວລາຕັດສິນຄະດີກ່ຽວກັບກຳມະສິດໃຫ້ໄອຍະການທຸກແຂວງຕໍ່ສານໃຫ້ແຍກບັນຫາກຳມະສິດແລະການປະຕິບັດນະໂຍບາຍອອກຈາກກັນທີ່ໄດ້ກ່າວມາເທິງນີ້. ຖ້າຫາກສານຍັງຕັດສິນກ່ຽວກັບການປະຕິບັດນະໂຍບາຍໃຫ້ບຸກຄົນຢູ່ເຮືອນກໍໃຫ້ໄອຍະການຂໍຄັດຄ້ານຄຳຕັດສິນນັ້ນຕໍ່ສານປະຊາຊົນຂັ້ນເທິງຕາມກົດໝາຍ .

ວຽງຈັນ, ວັນທີ່ 30 ພະຈິກ 1992

ອະທິໄອຍະການປະຊາຊົນ

ພອຍ ຊຸລາ